## ຄວາມຈິງທີ່ສຳຄັນ

- ✔ ໜັງສືຢັ້ງຢືນປະວັດການສັກຢາປ້ອງກັນໂຣກອັນປັດຈຸບັນຂອງ ACIR ຫຼື ຟອມປະວັດການສັກຢາປ້ອງກັນໂຣກ (ສຳລັບເດັກທີ່ຢູ່ໃນຕາຕະລາງການສັກຢາເພີ້ມ) ເປັນສິ່ງທີ່ຕ້ອງການໃນເວລາຈົດຊື່ເດັກເຂົ້າສູນດູແລເດັກ.
- ✔ ຟອມ ຂໍ້ຫ້າມໃນການໃຊ້ຢາ ຂອງ Medicare ຫຼື ຟອມ ຄວາມຮູ້ສຶກຄັດຄ້ານຕໍ່ການສັກຢາປ້ອງກັນໂຣກ ຈາກນາຍໝໍ ກໍເປັນໜັງສືທີ່ ອອກໃຫ້ໄດ້ ຕາມຄວາມເໝາະສົມ.
- ✔ ການສັກຢາປ້ອງກັນໂຣກຈະມີປະສິດທິພາບທີ່ສຸດຖ້າຫາກສັກໃຫ້ຖືກຕາມເວລາ
- ✔ ການຊັກຊ້າໃນການສັກຢາປ້ອງກັນໂຣກຈະເຮັດໃຫ້ເດັກມີຄວາມສ່ຽງຕໍ່ການຕິດພະຍາດ ແລະ ເຈັບປ່ວຍຢ່າງຮຸນແຮງ.
- ✔ ບັນດາເດັກທີ່ມີອາການເຈັບໄຂ້ທີ່ບໍ່ຮຸນແຮງເຊັ່ນຂີ້ມູກໄຫຼ ຫຼື ເປັນຫວັດໜ້ອຍນຶ່ງ ສາມາດໄດ້ຮັບການສັກຢາໄດ້ໂດຍປອດໄພ.
- ✔ ການສັກຢາປ້ອງກັນໂຣກໃຫ້ຫຼາຍຄົນໃນຊຸມຊົນກໍຍັງສາມາດຊ່ວຍປ້ອງກັນຜູ້ທີ່ບໍ່ໄດ້ສັກຢາ ແລະ ຊ່ວຍຄວບຄຸມບັນດາພະຍາດຮ້າຍແຮງທີ່ສາມາດປ້ອງກັນດ້ວຍຢາສັກໄດ້.
- ✔ ດາວໂຫຼດເອົາ ຟຣີໂຟນແອັບ *Save the Date to Vaccinate* (ຈື່ງມື້ໄວ້ສຳລັບສັກຢາ) ສຳລັບ ຕາຕະລາງການສັກຢາສະເພາະສ່ວນຕົວສຳລັບເດັກແຕ່ລະຄົນໂດຍມີການເຕືອນເພື່ອໃຫ້ແນ່ໃຈວ່າພວກເຂົາສັກຢາຖືກຕາມເວລາ. ເພື່ອດາວໂຫຼດເອົາ ແອັບ ຈົ່ງເຂົ້າເບິ່ງເວັບໄຊຕ໌ **Save the Date to Vaccinate** (www.immunisation.health.nsw.gov.au) **ແລະ ເຮັດຕາມ ລິງກ໌ ເຂົ້າຫາ ໄອທູນ (iTunes) (ສຳລັບ iPhone) ຫຼື Google Play (ສຳລັບ ແອນດຣອຍ -Android).**

## ຂໍ້ມູນເພີ້ມຕື່ມ

### ເວັບໄຊຕ໌ ຂອງ ACIR

www.humanservices.gov.au/customer/services/medicare/australian-childhood-immunisation-register

### ເວັບໄຊຕ໌ ຂອງ NSW Health

www.health.nsw.gov.au/immunisation

### NSW Health 'Save the Date to Vaccinate' ເວັບໄຊຕ໌ ຂອງການ ຣິນນະຣົງ

www.immunisation.health.nsw.gov.au

### Australian Government Department of Health & Ageing ໂຄງການ ການສັກຢາປ້ອງກັນໂຣກ ອອສເຕຣເລັຍ

www.immunise.health.gov.au




SHPN (HP) 130299

November 2013 © NSW Ministry of Health.

# ການ ເອົາລູກເຂົ້າ ສູນດູແລເດັກ ແລະ ການສັກຢາກັນໂຣກ

## ຂໍ້ມູນສຳລັບພໍ່ແມ່



NSW GOVERNMENT | Health

Lao

## ການປ້ອງກັນກ່ອນການຝາກສູນດູແລເດັກ

ມັນເປັນສິ່ງສຳຄັນທີ່ເດັກທຸກຄົນໄດ້ສັກຢາປ້ອງກັນໂຣກໃຫ້ຄົບກ່ອນເພື່ອຊ່ວຍປ້ອງກັນພວກເຂົາກ່ອນທີ່ຈະເລີ້ມເຂົ້າສູນດູແລເດັກ. ການສັກຢາປ້ອງກັນໂຣກຊ້າຈະເຮັດໃຫ້ພວກເດັກມີຄວາມສ່ຽງຕໍ່ການຕິດພະຍາດທີ່ຮ້າຍແຮງ.

## ການຈົດຊື່ເຂົ້າສູນດູແລເດັກ ແລະ ບັນດາຂໍ້ກຳນົດຂອງກົດໝາຍ

ພາຍໃຕ້ກົດໝາຍວ່າດ້ວຍສາທາຣະນະສຸກ ຂອງຣັດ NSW ບັນຍັດ ປີ 2010 ບັນດາພໍ່ແມ່ຕ້ອງມີ ໜັງສືຢັ້ງຢືນ ການລົງທະບຽນການສັກຢາປ້ອງກັນໂຣກວັຍເດັກ ຂອງ ອອສເຕຣເລັຍ [(Australian Childhood Immunisation Register) (ACIR)] ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ (Immunisation History Statement) (ຊຶ່ງສະແດງໃຫ້ເຫັນວ່າເດັກໄດ້ສັກຢາມາເຖິງປັດຈຸບັນ) ຫຼື ຟອມປະວັດການສັກຢາປ້ອງກັນໂຣກ (Immunisation History Form) IMMU13 (ຊຶ່ງສະແດງໃຫ້ເຫັນວ່າເດັກຢູ່ໃນລະຫວ່າງຕາຕະລາງຣາຍການສັກຢາເພີ້ມໃຫ້ຄົບ) ຫຼື ຟອມການຍົກເວັ້ນການສັກຢາປ້ອງກັນໂຣກ. ຂໍ້ມູນນີ້ຈະຖືກນຳໃຊ້ໃນການລະບຸ ແລະ ຍົກເວັ້ນເດັກຈາກສູນດູແລເດັກຖ້າຫາກວ່າພະຍາດທີ່ສາມາດປ້ອງກັນດ້ວຍຢາສັກເກີດລະບາດຂຶ້ນມາ.

**ບັນດາພໍ່ແມ່ຂອງເດັກຜູ້ທີ່ບໍ່ມີໜັງສືທີ່ຖືກຕ້ອງຈະບໍ່ສາມາດຈົດຊື່ລູກຂອງພວກເຂົາເຂົ້າໃນສູນດູ ແລເດັກໄດ້.**

## ຟອມຍົກເວັ້ນການສັກຢາປ້ອງກັນໂຣກ

ບັນດາເດັກທີ່ບໍ່ໄດ້ສັກຢາປ້ອງກັນໂຣກດ້ວຍເຫດຜົນທາງການແພດ ຫຼື ເດັກທີ່ພໍ່ແມ່ມີຄວາມຮູ້ສຶກຄັດຄ້ານຕໍ່ການສັກຢາປ້ອງກັນໂຣກສາມາດຈົດຊື່ເຂົ້າສູນດູແລເດັກໄດ້ ຖ້າຫາກວ່ານຶ່ງໃນຟອມຕ່າງໆ ດັ່ງຕໍ່ລົງໄປນີ້ໄດ້ຖືກນາຍໝໍ ຫຼື ພະຍາບານສັກຢາປ້ອງກັນໂຣກໄດ້ຂຽນຕື່ມໃຫ້ ແລະ ຍື່ນເຂົ້າພ້ອມໃນເວລາຈົດຊື່:

- ຟອມຍົກເວັ້ນການສັກຢາປ້ອງກັນໂຣກ **ຟອມ ຂໍ້ຫ້າມໃນການໃຊ້ຢາ (Medical Contraindication Form)** (IMMU11), ຫຼື
- ຟອມຍົກເວັ້ນການສັກຢາປ້ອງກັນໂຣກ **ຟອມ ຄວາມຮູ້ສຶກຄັດຄ້ານຕໍ່ການສັກຢາປ້ອງກັນໂຣກ (Conscientious Objection Form)** (IMMU12).

## ACIR ໜັງສືຢັ້ງຢືນປະວັດການສັກຢາປ້ອງກັນໂຣກ

ບັນດາພໍ່ແມ່ຈະໄດ້ຮັບໜັງສືຢັ້ງຢືນປະວັດການສັກຢາປ້ອງກັນໂຣກທາງໄປສະນີຫຼັງຈາກທີ່ລູກ ຂອງພວກເຂົາໄດ້ສັກຢາຕອນອາຍຸ 18 ເດືອນ ແລະ 3½ - 4ປີ. ບັນດາພໍ່ແມ່ສາມາດຂໍເອົາ ໜັງສືຢັ້ງຢືນປະວັດການສັກຢາປ້ອງກັນໂຣກໄດ້ທຸກເວລາ:

- ດ້ວຍການໂທຣະສັບຫາ ພະແນກລົງທະບຽນການສັກຢາປ້ອງກັນໂຣກວັຍເດັກ ຂອງ ອອສເຕຣ ເລັຍ ຕາມໝາຍເລກ **1800 653 809**
- ໂດຍຜ່ານ ບໍຣິການ ເມດີແຄຣ໌ ອອນລາຍນ໌ ທີ່ www.medicareaustralia.gov.au/online
- ດ້ວຍການ ຂໍໜັງສືຢັ້ງຢືນທາງ ອີເມລ໌ ໂດຍສົ່ງໄປທີ່ acir@medicareaustralia.gov.au
- ດ້ວຍການໄປທີ່ ສູນບໍຣິການ ຂອງ Department of Human Services, ຫ້ອງການ Medicare ຫຼື ຫ້ອງການ Centrelink ໃນທ້ອງຖິ່ນຂອງທ່ານ.

## ບັນດາເດັກທີ່ ໄດ້ສັກຢາມາເຖິງປັດຈຸບັນ

ບັນດາເດັກທີ່ຈົດຊື່ເຂົ້າສູນດູແລເດັກອາດຈະອາຍຸຍັງນ້ອຍເກີນໄປ ທີ່ຈະໄດ້ຮັບການສັກຢາປ້ອງກັນໂຣກວັຍເດັກໄດ້ຄົບທຸກຢ່າງ. ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ ACIR ສຳລັບບັນດາເດັກທີ່ໄດ້ສັກຢາມາເຖິງປັດຈຸບັນຈະມີຄຳວ່າ "up to date" ບັນທຶກໄວ້ຢູ່ທາງເທິງຂ້າງຊ້າຍຂອງໜັງສືນີ້. ການສັກຢາຄັ້ງຕໍ່ໄປ ແລະ ວັນທີ ຈະຖືກບັນທຶກໄວ້ຢູ່ຂ້າງລຸ່ມຂອງໜັງສື.

ສຳລັບບັນດາເດັກທີ່ມີອາຍຸໃຫຍ່ຂຶ້ນແດ່ທີ່ໄດ້ສັກຢາຄົບແລ້ວ ພາກສ່ວນສີມ່ວງທີ່ຢູ່ທາງລຸ່ມຂອງ ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ ມີຄຳວ່າ "This child has received all vaccines required by 5 years of age" (ເດັກຄົນນີ້ໄດ້ຮັບການສັກຢາຄົບໝົດທຸກຢ່າງຕາມຂໍ້ກຳນົດຂອງເດັກທີ່ມີອາຍຸເຖິງຫ້າປີ).

## ບັນດາເດັກທີ່ໄດ້ສັກຢາຢູ່ຕ່າງປະເທດ

ຕາຕະລາງການສັກຢາປ້ອງກັນໂຣກຢູ່ຕ່າງປະເທດອາດຈະແຕກຕ່າງໄປຈາກຕາຕະລາງຂອງ ອອສເຕຣເລັຍ ແລະ ຕ້ອງໃຫ້ນາຍໝໍ/ພະຍາບານກວດເບິ່ງ ຊຶ່ງເພິ່ນຈະເປັນຜູ້ທີ່ສົ່ງຂໍ້ມູນນີ້ໄປໃຫ້ ACIR. ຫຼັງຈາກນັ້ນ ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ ACIR ກໍຈະຖືກອອກໃຫ້ແກ່ພໍ່ແມ່ໂດຍ ACIR.

## ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ ທີ່ບໍ່ຖືກຕ້ອງ

ຖ້າຫາກການສັກຢາຢ່າງໃດຢ່າງນຶ່ງໄດ້ຂາດໄປຈາກໜັງສືຢັ້ງຢືນນີ້ ພໍ່ແມ່ຄວນຕິດຕໍ່ຫານາຍໝໍ/ ພະຍາບານທີ່ເປັນຜູ້ສັກຢາໃຫ້ເດັກເພື່ອກວດເບິ່ງວ່າບັນທຶກການສັກຢາໄດ້ຖືກສົ່ງໄປໃຫ້ ACIR. ໃນເມື່ອ ACIR ໄດ້ຮັບຂໍ້ມູນໃໝ່ຈາກນາຍໝໍ/ພະຍາບານແລ້ວ ທາງ ACIR ກໍຈະອອກ ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກສະບັບໃໝ່ໃຫ້ແກ່ພໍ່ແມ່.

## ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກ – ສະແດງໃຫ້ເຫັນວ່າເດັກບໍ່ໄດ້ສັກຢາຄົບ

ບັນດາເດັກທີ່ສັກຢາຊ້າກໍສາມາດຈົດຊື່ເຂົ້າສູນດູແລເດັກໄດ້ໃນທັນທີທີ່ພວກເຂົາໄດ້ເລີ້ມມີແຜນການສັກຢາເພີ້ມໃຫ້ຄົບ. ນາຍໝໍ/ພະຍາບານຕ້ອງຂຽນຕື່ມຟອມປະວັດການສັກຢາປ້ອງກັນໂຣກ ແລ້ວສົ່ງໄປໃຫ້ ACIR ແລະ ເອົາໃຫ້ພໍ່ແມ່ສຳເນົານຶ່ງ.

## ການແພ່ລະບາດຂອງພະຍາດທີ່ສາມາດປ້ອງກັນດ້ວຍຢາສັກ

ບັນດາເດັກທີ່ບໍ່ໄດ້ສັກຢາປ້ອງກັນໂຣກອາດຈະຕ້ອງຢູ່ເຮືອນພາຍໃນລະຍະເວລາທີ່ມີການແພ່ລະບາດຂອງພະຍາດ. ອັນນີ້ແມ່ນເພື່ອປ້ອງກັນເດັກ ແລະ ຍັງຈະເປັນການຢຸດຢັ້ງການແພ່ຜາຍຂອງພະຍາດຢູ່ໃນຊຸມຊົນອີກດ້ວຍ.

## ໃບຢັ້ງຢືນປະວັດການສັກຢາປ້ອງກັນໂຣກອັນປັດຈຸບັນ

ຫຼັງຈາກການສັກຢາແຕ່ລະຄັ້ງ ບັນດາພໍ່ແມ່ຄວນເອົາ ໜັງສືຢັ້ງຢືນປະວັດການສັກຢາປ້ອງກັນໂຣກອັນປັດຈຸບັນໃຫ້ຜູ້ອຳນວຍການຂອງສູນດູແລເດັກເພື່ອຈະໄດ້ເອົາໃສ່ໃນການລົງທະບຽນການສັກຢາປ້ອງກັນໂຣກຂອງພວກເຂົາ. ບັນດາພໍ່ແມ່ສາມາດພິມເອົາໜັງສືຢັ້ງຢືນໄດ້ໂດຍກົງທາງອອນລາຍນ໌ຈາກເວັບໄຊຕ໌ຂອງ Medicare.

## ເງິນພາສີຄອບຄົວ ພາກ A (FAMILY TAX BENEFIT PART A)

ເພື່ອຈະໄດ້ຮັບເງິນ Family Tax Benefit Part A ເພີ້ມ ບັນດາເດັກຕ້ອງໄດ້ຖືກບັນທຶກໂດຍ ACIR ວ່າໄດ້ສັກຢາຄົບແລ້ວພາຍໃນປີທີ່ເດັກມີອາຍຸ 1, 2, ແລະ 5 ປີ. ບັນດາພໍ່ແມ່ອາດຈະຍັງມີສິດຖ້າຫາກພວກເຂົາຍື່ນຟອມຍົກເວັ້ນການສັກຢາປ້ອງກັນໂຣກເຂົ້າໄປ.

